ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 001 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 24.10.2014

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປັບປຸງມາດຕາ 20 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສ່ວຍສາອາກອນ

---

- ອີງຕາມ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 079 / ຄປຈ, ລົງວັນທີ 12/ 06 / 2014;
- ອີງຕາມ ໜັງສືສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 035 /ຄປຈ, ລົງວັນທີ 23 / 10 / 2014.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:

ມາດຕາ 1. ປັບປຸງມາດຕາ 20 ຂໍ້ 2 ກ່ຽວກັບອັດຕາອາກອນຊົມໃຊ້ສຳລັບການບໍລິການສະເພາະ ລຳດັບທີ 1 ແລະ 7 ຂອງກົດໝາຍວ່າດ້ວຍ ສ່ວຍສາອາກອນ ສະບັບເລກທີ 05/ສພຊ,ລົງວັນທີ 20/12/2011 ດັ່ງນີ້:

1. ການບັນເທີງ: ໂຮງເຕັ້ນລຳ, ດິດສະໂກເທັກ, ຄາຣາໂອເກະ ຈາກອັດຕາ 60% ມາເປັນ 35%;
7. ກິດຈະການກາຊີໂນ, ຕູ້ເກມກາຊີໂນ ຈາກອັດຕາ 80% ມາເປັນ 35%.

ມາດຕາ 2. ລັດຖະບັນຍັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ